# ບົດຂ່າວ

**ພິທີລົງນາມ ການຮ່ວມມືລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ວ່າດ້ວຍ ການບໍລິການຊຳລະຄ່າບໍລິການຕ່າງໆຜ່ານ ທຄຕລ.**




ໃນວັນທີ 06 ກຸມພາ 2017 ທີ່ຜ່ານມາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດໄດ້ຈັດພິທີລົງນາມ ການຮ່ວມມື ລະຫວ່າງ ທຄຕລ ແລະ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ວ່າດ້ວຍ ການບໍລິການຊຳລະຄ່າບໍລິການຕ່າງໆຜ່ານ ທຄຕລ.

ການລົງນາມໃນຄັ້ງນີ້ ແມ່ນລົງນາມໂດຍ: ທ່ານ ພັນຊະນະ ຄຸນນຸວົງ, ຮອງຜູ້ອຳນວຍການ, ທຄຕລ ແລະ ທ່ານ ຊັດຊະອານ ເພີ່ມສຸກຈາຣຸຊັບ,ກຳມະການຜູ່ຈັດການໃຫຍ່ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອຈຳກັດ.

ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນຄັ້ງນີ້ ປະກອບມີ:

**ທ່ານ ຄຳສຸກ ສູນດາລາ, ຮອງປະທານ ສະພາບໍລິຫານ, ທຄຕລ**

ພ້ອມດ້ວຍ ຄະນະອຳນວຍການ, ຄະນະພະແນກ, ຄະນະສູນ, ຄະນະສາຂາ ຂອງ ທຄຕລ ແລະ ຄະນະຜູ້ແທນຈາກ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ ກໍ່ໄດ້ເຂົ້າຮ່ວມ.

ສັນຍາວ່າດ້ວຍການບໍລິການຊໍາລະຄ່າບໍລິການຜ່ານ ທຄຕລ ທີ່ເຊັນໃນຄັ້ງນີ້ ຈຸດປະສົງຫຼັກແມ່ນການຕົກລົງ ຮ່ວມມືກັນ ລະຫວ່າງ ທຄຕລ ແລະ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈໍາກັດ ໃນການອໍານວຍຄວາມສະດວກ ໃຫ້ແກ່ລູກຄ້າ ບໍລິສັດກຸງສີ ບໍລິການ ເຊົ່າສິນເຊື່ອຈໍາກັດ ເພື່ອ ສາມາດຊໍາລະຄ່າຜ່ອນສິນຄ້າ ຜ່ານຊ່ອງທາງຕ່າງໆຂອງ ທຄຕລ ເຊັ່ນ: ຜ່ານຊ່ອງທາງເຄົາເຕີ້, ຜ່ານຊ່ອງທາງ BCELONE, ຜ່ານຊ່ອງທາງ I-BANK ແລະ ຜ່ານຊ່ອງທາງ ATM.

ນອກຈາກນີ້, ລູກຄ້າຍັງສາມາດ ເລືອກບໍລິການຕັ້ງການຊໍາລະເງິນແບບອັດຕະໂນມັດ (Auto-Payment) ເຊິ່ງ Auto-Payment ເປັນບໍລິການຕັດເງິນຈາກບັນຊີຂອງລູກຄ້າຂອງບໍລິສັດທີ່ມີບັນຊີຢູ່ ທຄຕລ ເຂົ້າບັນຊີບໍລິສັດ ເພື່ອຊໍາລະຄ່າບໍລິການຕ່າງໆ ຕາມການຕົກລົງເຫັນດີ ລະຫວ່າງລູກຄ້າ ແລະ ບໍລິສັດ ໂດຍລູກຄ້າບໍ່ຈໍາເປັນ ຕ້ອງເດີນທາງເຂົ້າມາດໍາເນີນທຸລະກໍາ ຢູ່ທະນາຄານ ຫຼື ເດີນທາງໄປຊໍາລະເງິນໃຫ້ບໍລິສັດ.

ທ່ານ ພັນຊະນະ ຄູນນຸວົງ, ຮອງຜູ້ອໍານວຍການ, ທຄຕລ ໄດ້ກ່າວວ່າ: "ການຮ່ວມມືໃນຄັ້ງນີ້ ລະຫວ່າງ ທຄຕລ ແລະ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈໍາກັດ ຖືວ່າ ເປັນຂີດໝາຍອັນສໍາຄັນຕໍ່ ທຄຕລ ໃນການເພີ່ມຄວາມຫລາກຫລາຍດ້ານຊ່ອງທາງບໍລິການໃຫ້ແກ່ລູກຄ້າ ທັງເບື້ອງ ທຄຕລ ແລະ ລູກຄ້າຂອງທາງບໍລິສັດ".

ບໍລິການຊໍາລະຄ່າສາທາລະນຸປະໂພກ ຫລື Bill Payment ຜ່ານລະບົບທະນາຄານ ແມ່ນເປັນການບໍລິການທີ່ໄດ້ຮັບການຕອບຮັບເປັນຢ່າງດີຈາກສັງຄົມໃນປະຈຸບັນ. ທຄຕລ ໄດ້ເລີ່ມຕົ້ນໃຫ້ບໍລິການ Bill Payment ທໍາອິດ ໃນປີ 2009 ຈາກນັ້ນ ທຄຕລ ກໍ່ໄດ້ມີການພັດທະນາຊ່ອງທາງການຊໍາລະໃຫ້ຫລາກຫລາຍຂຶ້ນ ແລະ ມີການນໍາໃຊ້ຊ່ອງທາງຊໍາລະແບບ Online ໂດຍສະເພາະແມ່ນຊໍາລະຜ່ານ Application BCEL One ຜ່ານໂທລະສັບມືຖືຊຶ່ງນັບມື້ໄດ້ຮັບຄວາມນິຍົມ ຈາກລູກຄ້າ.

ທຄຕລ ໃນນາມທີ່ເປັນທະນາຄານທຸລະກິດໃນແຖວໜ້າ ຂອງ ສ.ປ.ປ ລາວ, ປະຈຸບັນ ມີ 19 ສາຂາ, 80 ໜ່ວຍບໍລິການ ພ້ອມດ້ວຍມີການນໍາໃຊ້ເຕັກໂນໂລຢີເຂົ້າໃນການບໍລິການໃຫ້ ມີຄວາມທັນສະໄໝ.

ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈໍາກັດ ແມ່ນບໍລິສັດໃນເຄືອ Mitsubishi UFJ Financial Group (MUFG) ຂອງປະເທດຍີ່ປຸ່ນ ເຊິ່ງເປັນກຸ່ມສະຖາບັນການເງິນທີ່ໃຫຍ່ຕິດອັນດັບ 1 ໃນປະເທດຍີ່ປຸ່ນ ແລະ ອັນດັບ 3 ຂອງໂລກ. ກຸ່ມສະຖາບັນການເງິນຂອງ MUFG ໄດ້ເຂົ້າມາດໍາເນີນທຸລະກິດໃນ ສປປ ລາວ ຕັ້ງແຕ່ປີ1994 ໃນນາມທະນາຄານ ກຸງສີ ສາຂານະຄອນຫລວງວຽງຈັນ, ປີ2009 ໄດ້ເປີດສາຂາສະຫວັນນະເຂດ ແລະໃນປີ 2014 ໄດ້ສ້າງຕັ້ງ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈໍາກັດ.

ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈໍາກັດ ມີຜະລິດຕະພັນຢູ່ 2 ກຸ່ມຫລັກ ໄວ້ໃຫ້ບໍລິການລູກຄ້າຄື: ກຸງສີ ໂອໂຕ: ໃຫ້ບໍລິການ ຜ່ອນລົດໃຫຍ່ ແລະ ກຸງສີ ເຟີດຊ້ອຍ: ໃຫ້ບໍລິການຜ່ອນຄໍາ, ມືຖືສະມາດໂຟນ, ເຄື່ອງໃຊ້ໄຟຟ້າໃນຄົວເຮືອນ. ຈຸດປະສົງຫລັກຂອງການດໍາເນີນທຸລະກິດໃນ ສປປ ລາວຂອງ ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈໍາກັດ ແມ່ນເພື່ອປະກອບສ່ວນ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວໃຫ້ດີຂຶ້ນ ຜ່ານການໃຫ້ບໍລິການດ້ານການເງິນທີ່ດີທີ່ສຸດ ໃນອັດຕາດອກເບ້ຍ ຍຸດຕິທໍາ ຕາມວິໄສທັດ ແລະ ພັນທະກິດຂອງບໍລິສັດ.